ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 018 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 28/11/16

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ວ່າດ້ວຍການຮັບຮອງເອົາແຜນການຕິດຕາມກວດກາ ກ່ຽວກັບການອອກນິຕິກຳລຸ່ມກົດໝາຍ ແລະ ຜົນກະທົບ ຈາກການນຳໃຊ້ເຄມີອັນຕະລາຍ ເກີນຄ່າມາດຕະຖານ ຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ

- ອີງຕາມມາດຕາ 58 ຂອງລັດຖະທຳມະນູນ ສປປ ລາວ ສະບັບປີ 2015 ແລະ ມາດຕາ 65 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ) ປີ 2015;
- ອີງຕາມບົດລາຍງານ ຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ, ການອອກນິຕິກຳລຸ່ມກົດໝາຍ ແລະ ການຕິດຕາມກວດກາຜົນກະທົບຈາກການນຳໃຊ້ເຄມີອັນຕະລາຍເກີນຄ່າມາດຕະຖານ ຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ສະບັບເລກທີ 036/ຄລສ, ລົງວັນທີ 31 ຕຸລາ 2016.

ຜ່ານການຄົ້ນຄວ້າພິຈາລະນາ ແລະ ປະກອບຄຳເຫັນ ຂອງສະມາຊິກສະພາແຫ່ງຊາດ ຢ່າງເລິກເຊິ່ງ ຕໍ່ບົດລາຍງານ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ, ການອອກນິຕິກຳລຸ່ມກົດໝາຍ ແລະ ການຕິດຕາມກວດກາຜົນກະທົບ ຈາກການນຳໃຊ້ເຄມີອັນຕະລາຍ ເກີນຄ່າມາດຕະຖານ ຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ໃນວາລະກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ VIII ຄັ້ງວັນທີ 31 ຕຸລາ 2016.

### ກອງປະຊຸມ ຕົກລົງ:

ມາດຕາ 1 ຮັບຮອງບົດລາຍງານ ຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ, ການອອກນິຕິກຳລຸ່ມກົດໝາຍ, ການຕິດຕາມກວດກາຜົນກະທົບ ຈາກການນຳໃຊ້ເຄມີອັນຕະລາຍ ເກີນຄ່າມາດຕະຖານ ຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ.

1.1 ກອງປະຊຸມ ສະແດງຄວາມຊົມເຊີຍ ຕໍ່ຄວາມພະຍາຍາມ ຂອງລັດຖະບານ ທີ່ໄດ້ເອົາໃຈໃສ່ຄົ້ນຄວ້າ ແລະ ອອກນິຕິກຳລຸ່ມກົດໝາຍ ເຂົ້າສູ່ຊີວິດຕົວຈິງໃນຂົງເຂດການປົກຄອງ ແລະ ຍຸຕິທຳ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ,ເສດຖະກິດ ແລະ ວັດທະນະທຳ-ສັງຄົມ ໄດ້ 238 ມາດຕາ ໃນຈຳນວນທັງໝົດ 516 ມາດຕາ ຊຶ່ງໄດ້ປະກອບສ່ວນສຳຄັນເຂົ້າໃນການເພີ່ມເຄື່ອງມືໃຫ້ຂະແໜງການທີ່ກ່ຽວຂ້ອງ ໃນການຄຸ້ມຄອງລັດ, ຄຸ້ມຄ້ອງເສດຖະກິດ-ສັງຄົມໄດ້ຄືບຖ້ອນຂຶ້ນເປັນກ້າວໆ.

ແຕ່ຄຽງຄູ່ກັນນັ້ນ, ຍັງມີບາງກະຊວງ, ອົງການ ບໍ່ທັນໄດ້ເອົາໃຈໃສ່ຫັນເປັນອັນລະອຽດ ແລະ ປະກາດໃຊ້ນິຕິກຳລຸ່ມກົດໝາຍ ທີ່ນອນໃນຄວາມຮັບຜິດຊອບ ຂອງຂະແໜງການຕົນເທື່ອ ຊຶ່ງໄດ້ສົ່ງຜົນກະທົບທາງລົບບໍ່ໜ້ອຍ ແກ່ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຂອງປະເທດຊາດ ກໍຄື ຕໍ່ການປົກປ້ອງສິດ ແລະ ຜົນປະໂຫຍດ, ຊີວິດ, ສຸຂະພາບ ແລະ ຊັບສິນ ຂອງປະຊາຊົນລາວບັນດາເຜົ່າ.

1.2 ກອງປະຊຸມ ຊົມເຊີຍລັດຖະບານ ທີ່ໄດ້ເອົາໃຈໃສ່ ສ້າງ ແລະ ປັບປຸງນິຕິກຳ ໄປຄວບຄູ່ກັບການຄຸ້ມຄອງກວດກາການ ນຳເຂົ້າ, ຜະລິດ, ຈຳໜ່າຍ ແລະ ການນຳໃຊ້ສານເຄມີ ເຂົ້າໃນການຜະລິດ ທຸລະກິດ ແລະ ການບໍລິການ ເປັນຕົ້ນການຜະລິດກະສິກຳ ແລະ ອຸດສາຫະກຳປຸງແຕ່ງ ເພື່ອການບໍລິໂພກ ແລະ ອຸປະໂພກຂອງສັງຄົມ ຊຶ່ງໄດ້ປະກອບສ່ວນ

ເຮັດໃຫ້ເສດຖະກິດແຫ່ງຊາດ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ສ້າງວຽກເຮັດງານທຳ ແລະ ເຮັດໃຫ້ຊີວິດການເປັນຢູ່ ຂອງປະຊາຊົນ ນັບມື້ນັບດີຂຶ້ນ.

ແຕ່ເຖິງຢ່າງໃດກໍ່ຕາມ ການນຳເຂົ້າ ແລະ ການນຳສານໃຊ້ເຄມີ ເຂົ້າໃນການຜະລິດ ທຸລະກິດ ແລະ ການບໍລິການ ຍັງຂາດການຕິດຕາມ, ຄຸ້ມຄອງ ແລະ ກວດກາ ເປັນຕົ້ນ ສະພາບການນຳໃຊ້ສານເຄມີ ເຂົ້າໃນການຜະລິດກະສິກຳ ແລະ ອຸດສາຫະກຳປຸງແຕ່ງ ເພື່ອການບໍລິໂພກ ແລະ ອຸປະໂພກ ຍັງຊະຊາຍ, ເກີນຄ່າມາດຕະຖານ ແລະ ບໍ່ຖືກຕ້ອງຕາມຫລັກວິຊາການ ຊຶ່ງໄດ້ສົ່ງຜົນກະທົບຢ່າງຮ້າຍແຮງ ຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ, ພືດ ແລະ ລະບົບນິເວດ ກໍຄືການພັດທະນາເສດຖະກິດ-ສັງຄົມ ທັງໄລຍະສັ້ນ ແລະ ໄລຍະຍາວ ຂອງປະເທດ.

ມາດຕາ 2 ຮັບຮອງເອົາແຜນການ ແລະ ມາດຕະການ ເພື່ອສຸມໃສ່ຕິດຕາມກວດກາ ການຈັດຕັ້ງປະຕິບັດກົດໝາຍ, ການອອກນິຕິກຳລຸ່ມກົດໝາຍ ແລະ ການແກ້ໄຂຜົນກະທົບຈາກການນຳໃຊ້ເຄມີອັນຕະລາຍ ເກີນຄ່າມາດຕະຖານ ຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ຕາມການສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ.

2.1 ກອງປະຊຸມສະພາແຫ່ງຊາດ ສະເໜີມາຍັງລັດຖະບານ, ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ສູນກາງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ເອົາໃຈໃສ່ຄົ້ນຄວ້າ ແລະ ປະກາດໃຊ້ນິຕິກຳລຸ່ມກົດໝາຍ ດັ່ງນີ້:

1. ເອົາໃຈໃສ່ຈັດຕັ້ງປະຕິບັດແຜນສ້າງ ແລະ ປັບປຸງກົດໝາຍ ໃນໄລຍະ 05 ປີ ແລະ ປະຈຳປີ ໃຫ້ບັນລຸຕາມຄາດໝາຍ ທີ່ວາງໄວ້; ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ທີ່ໄດ້ປະກາດໃຊ້ໃນແຕ່ລະຂົງເຂດ ເພື່ອວາງແຜນປັບປຸງ ແລະ ສ້າງໃໝ່ໃຫ້ສອດຄ່ອງ ແລະ ເໝາະສົມກັບສະພາບການພັດທະນາເສດຖະກິດ-ສັງຄົມ ໃນໄລຍະໃໝ່;

2. ຊຸກຍູ້ຄົ້ນຄວ້າ ແລະ ປະກາດໃຊ້ນິຕິກຳລຸ່ມກົດໝາຍ ຂອງແຕ່ລະຂະແໜງການ ໃຫ້ສຳເລັດ ເພື່ອຮັບປະກັນໃຫ້ເປັນເຄື່ອງມືໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຕາມຂະແໜງການເປັນລະບົບຄົບຊຸດ ແລະ ຮັບປະກັນຈັດຕັ້ງຜັນຂະຫຍາຍ 278 ມາດຕາ ໃນບັນດາກົດໝາຍທີ່ ສະພາແຫ່ງຊາດ ໄດ້ຮັບຮອງໄປແລ້ວໃຫ້ສຳເລັດໃນປີ 2017;

3. ເອົາໃຈໃສ່ໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳລຸ່ມກົດໝາຍໃຫ້ພາຍໃນບັນດາຂະແໜງການຂອງຕົນ ໄດ້ເຂົ້າໃຈ, ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ແຕ່ສູນກາງລົງຮອດທ້ອງຖິ່ນ ເພື່ອເຄົາລົບ ແລະ ຈັດຕັ້ງປະຕິບັດກົດໝາຍ, ນິຕິກຳລຸ່ມກົດໝາຍທີ່ມີແລ້ວ ຢ່າງເຂັ້ມງວດ;

4. ສ້າງ ແລະ ປັບປຸງກົງຈັກຮັບຜິດຊອບວຽກງານນິຕິກຳ ປະຈຳຢູ່ບັນດາກະຊວງ, ອົງການ ຂອງຕົນດ້ວຍການກຳນົດພາລະບົດບາດ, ສິດ ແລະ ໜ້າທີ່, ການປະກອບບຸກຄະລາກອນ ແລະ ງົບປະມານ ເພື່ອຮັບປະກັນຈັດຕັ້ງຜັນຂະຫຍາຍແນວທາງການເມືອງ ແຜນນະໂຍບາຍທີ່ກຳນົດໄວ້ໃນມະຕິ X ຂອງພັກ ເປັນກົດໝາຍ, ນິຕິກຳລຸ່ມກົດໝາຍ ຂອງອົງການຕົນ ດ້ວຍການຍົກສູງຄວາມຮັບຜິດຊອບຂອງຜູ້ເປັນຫົວໜ້າໃນຂະແໜງການ ຂັ້ນສູນກາງ;

5. ຊີ້ນຳກະຊວງຍຸຕິທຳ ປະສານສົມທົບກັບຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຄົ້ນຄວ້າ ກຳນົດກົນໄກຊຸກຍູ້ ບັນດາກະຊວງ, ອົງການ ຈັດຕັ້ງຜັນຂະຫຍາຍແຜນສ້າງ ແລະ ປັບປຸງກົດໝາຍ ປະຈຳປີ 2017 ທີ່ສະພາແຫ່ງຊາດ ໄດ້ຮັບຮອງເອົາ;

6. ລາຍງານ ຜົນຂອງການຈັດຕັ້ງຜັນຂະຫຍາຍການອອກນິຕິກຳລຸ່ມກົດໝາຍຈຳນວນ 278 ມາດຕາ ໃນບັນດາກົດໝາຍທີ່ ສະພາແຫ່ງຊາດ ໄດ້ຮັບຮອງເອົາແລ້ວ ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ່ 4 ຂອງສະພາແຫ່ງຊາດ ຊຸດທີ VIII ໃນປີ 2017.

2.2 ການແກ້ໄຂຜົນກະທົບ ຈາກການນຳໃຊ້ເຄມີອັນຕະລາຍ ຢ່າງຊະຊາຍ ແລະ ເກີນຄ່າມາດຕະຖານ ຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ, ກອງປະຊຸມ ສະເໜີໃຫ້ລັດຖະບານ ຊີ້ນຳກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງຂັ້ນທ້ອງຖິ່ນ ປະຕິບັດ ດັ່ງນີ້:

1. ຄົ້ນຄວ້າແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ທີ່ເກີດຈາກກິດຈະການ ການຜະລິດກະສິກຳ ແລະ ອຸດສາຫະກຳປຸງແຕ່ງຕ່າງໆ ເປັນຕົ້ນ ການນຳໃຊ້ເຄມີ ເກີນຄ່າມາດຕະຖານ ເຂົ້າໃນການປູກພືດກະສິກຳເປັນສິນຄ້າ, ການສົ່ງກິ່ນເໝັນຈາກຟາມລ້ຽງສັດ ແລະ ສະຖານທີ່ເກັບມ້ຽນຂີ້ເຫຍື້ອ, ການປ່ອຍນ້ຳເປື້ອນ ແລະ ການປ່ອຍມົນລະພິດຈາກໂຮງງານຕ່າງໆ ທີ່ປະຊາຊົນໄດ້ຮັບຜົນກະທົບ ໃຫ້ເປັນຮູບປະທຳ; ເຂັ້ມງວດ ໃນການປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ທີ່ຕິດພັນກັບວຽກງານສິ່ງແວດລ້ອມ ສັງຄົມ ແລະ ປະຕິບັດມາດຕະການ ຕໍ່ຜູ້ລະເມີດຕາມລະບຽບກ່ຽວຂ້ອງ;

2. ເອົາໃຈໃສ່ຄຸ້ມຄອງ ກວດກາ ການນໍາເຂົ້າ ແລະ ການບໍລິການ, ຕິດຕາມ ກວດກາ ແລະ ປະເມີນຜົນ ຢ່າງເປັນປົກກະຕິ ການນໍາໃຊ້ເຄມີອັນຕະລາຍ ຢ່າງຊະຊາຍ ແລະ ເກີນຄ່າມາດຕະຖານ ເຂົ້າໃນກິດຈະການ ການຜະລິດກະສິກໍາ ແລະ ອຸດສາຫະກໍາປຸງແຕ່ງ; ມີມາດຕະການແກ້ໄຂ ຢ່າງເຂັ້ມງວດ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວຂ້ອງ;

3. ເອົາໃຈໃສ່ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບຄວາມເປັນອັນຕະລາຍ ຂອງເຄມີປະເພດຕ່າງໆ ລວມທັງການນໍາໃຊ້ ແລະ ວິທີການປ້ອງກັນ ໃຫ້ສັງຄົມໄດ້ຮັບຮູ້ ຢ່າງມີຈຸດສຸມ ແລະ ກວ້າງຂວາງ;

4. ເພີ່ມທະວີ ກົນໄກການປະສານງານ ໃນການຄຸ້ມຄອງ ແລະ ກວດກາການນໍາໃຊ້ເຄມີອັນຕະລາຍ ລະຫວ່າງຂະແໜງການສູນກາງດ້ວຍກັນ, ຂະແໜງການສູນກາງ ແລະ ທ້ອງຖິ່ນ ແລະ ຂະແໜງການທ້ອງຖິ່ນດ້ວຍກັນ ໃຫ້ມີຄວາມຈະແຈ້ງ ທາງດ້ານພາລະບົດບາດ, ຄວາມຮັບຜິດຊອບ ກໍ່ຄືການຕິດຕາມກວດກາການແກ້ໄຂຜົນກະທົບ ດັ່ງກ່າວໃຫ້ສອດຄ່ອງກັບກົດໝາຍ ວ່າດ້ວຍການຄຸ້ມຄອງເຄມີ ແລະ ກົດໝາຍທີ່ກ່ຽວຂ້ອງ;

5. ເອົາໃຈໃສ່ບໍາລຸງສ້າງ ແລະ ຍົກລະດັບຄວາມສາມາດ ຂອງພະນັກງານສະເພາະດ້ານ ເພື່ອກວດກາ ແລະ ຄວບຄຸມມົນລະພິດ ເປັນຕົ້ນ ສານເຄມີເຈືອປົນ ຢູ່ໃນອາຫານ, ນໍ້າ, ທີ່ດິນ, ອາກາດ ແລະ ສິນຄ້າບໍລິໂພກ ແລະ ອຸປະໂພກ ອື່ນໆ ທີ່ເກີນຄ່າມາດຕະຖານຄຸນນະພາບສິ່ງແວດລ້ອມ ຫລື ມາດຕະຖານຄວບຄຸມມົນລະພິດແຫ່ງຊາດ ໃຫ້ສາມາດຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການ ທີ່ຈໍາເປັນ;

6. ເພີ່ມການລົງທຶນເຂົ້າໃສ່ການກວດກາ, ສ້າງຫ້ອງທົດລອງ, ຈັດຊື້ເຄື່ອງມື ແລະ ອຸປະກອນຮັບໃຊ້ສະເພະ ໃຫ້ແກ່ ການກວດກາ, ວິເຄາະ ວິໄຈສານເຄມີປົນເປື້ອນໃນອາຫານ, ນໍ້າ, ທີ່ດິນ ອາກາດ ແລະ ສິນຄ້າບໍລິໂພກ ແລະ ອຸປະໂພກອື່ນ ທີ່ເກີນຄ່າມາດຕະຖານຄຸນນະພາບສິ່ງແວດລ້ອມ ຫລືມາດຕະຖານຄວບຄຸມມົນລະພິດແຫ່ງຊາດ;

7. ສະເໜີໃຫ້ລັດຖະບານ ລາຍງານຜົນ ຂອງການແກ້ໄຂ ຜົນກະທົບຈາກການນໍາໃຊ້ ເຄມີອັນຕະລາຍ ຢ່າງຊະຊາຍ ແລະ ເກີນຄ່າມາດຕະຖານ ຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທໍາມະຊາດ ຕໍ່ການຜະລິດ ແລະ ການດໍາລົງຊີວິດຂອງປະຊາຊົນ ໃຫ້ຄະນະປະຈໍາສະພາແຫ່ງຊາດ ພາຍໃນເດືອນ **ກັນຍາ 2017** ເພື່ອພິຈາລະນາ.

ມາດຕາ 3 ມອບໃຫ້ລັດຖະບານ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ສູນກາງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 4 ມອບໃຫ້ຄະນະປະຈໍາສະພາແຫ່ງຊາດ, ບັນດາກໍາມາທິການສະພາແຫ່ງຊາດ ແລະ ກົງຈັກທີ່ຄະນະປະຈໍາສະພາແຫ່ງຊາດສ້າງຕັ້ງຂຶ້ນ, ສະມາຊິກສະພາແຫ່ງຊາດ ແລະ ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ມີຜົນສໍາເລັດເປັນຢ່າງດີ.

ມາດຕາ 5 ມະຕິສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປານີ ຢາທໍ່ຕູ້**